2. ລາຍລະອຽດຂອງຄວາມຮ່ວມມືທາງວິຊາການ ຊຶ່ງເປັນຜົນງານຈາກບົດບັນທຶກຄວາມຮ່ວມມື ທາງວິຊາການ (Memorandum of Understanding – MOU) ຈະມີການເຈລະຈາ ແລະ ການກຳນົດຂຶ້ນໃນຮູບຂອງສັນຍາ ຊຶ່ງລົງນາມໂດຍທັງສອງຝ່າຍ.

3. ທຸກໆກິດຈະກຳໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະໄດ້ຮັບການຄຸ້ມຄອງຈາກລະບຽບກົດໝາຍ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຣາຊະອານາຈັກໄທ. ທຸກໆຂໍ້ຕົກລົງ ແລະ ບັນດາທ່າແຮງຂອງທັງສອງຝ່າຍຈະເປັນ ຂົດໝາຍໃນການບໍລິຫານໃຫ້ແກ່ທຸກຂໍ້ສະເໜີນຳລັດຖະບານ ເພື່ອຂໍອະນຸຍາດນຳເຈົ້າໜ້າທີ່ໃນການຂໍອະນຸມັດ.

4. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງກົດໝາຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກົດໝາຍຂອງ ຣາຊະອານາຈັກໄທ. ທຸກໆການຕົກລົງເຫັນດີ ແລະ ພັນທະຂອງທັງສອງທີ່ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈ, ບົດບັນທຶກສະບັບນີ້ ຕ້ອງຮັບປະກັນ ແລະ ປະຕິບັດຕາມການເຫັນດີພ້ອມການອະນຸມັດ ແລະ ຮັບຮອງຈາກລັດຖະບານ.

5. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະດຳເນີນໄປເປັນເວລາ 05 ປີ ແລະ ຈະມີການສະຫຼຸບ ແລ້ວຮ່າງຂຶ້ນມາໃໝ່ ໂດຍມີການເຫັນດີຈາກທັງສອງຝ່າຍ. ຝ່າຍໃດຝ່າຍໜຶ່ງສາມາດສະເໜີການຢຸດຕິການຮ່ວມມື ໂດຍມີການແຈ້ງເປັນລາຍລັກອັກສອນ ຢ່າງເປັນທາງການຕໍ່ກັນ 06 ເດືອນລ່ວງໜ້າ.

6. ທຸກຂໍ້ຂັດແຍ່ງ ຫຼືຄວາມບໍ່ເປັນເອກະພາບທີ່ເກີດຂຶ້ນຈາກການຕີຄວາມໝາຍ ຫຼືການຈັດຕັ້ງປະຕິບັດໃນບົດບັນທຶກຄວາມເຂົ້າໃຈສະບັບນີ້ຈະໄດ້ມີການແກ້ໄຂແບບເພື່ອນມິດ ໂດຍມີການປຶກສາຫາລືລະຫວ່າງທັງສອງຝ່າຍຮ່ວມກັນ.

7. ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະໄດ້ເຮັດເປັນ 03 ສະບັບ ສະບັບຕົ້ນ ພາສາອັງກິດ, ພາສາລາວ ແລະ ພາສາໄທ ທຸກໆສະບັບມີຄ່າເທົ່າກັນ, ຖ້າກໍລະນີມີຄວາມແຕກຕ່າງກັນໃນການຕີຄວາມໝາຍໃຫ້ຖືເອົາພາສາອັງກິດເປັນບ່ອນອີງ.

ບົດບັນທຶກຄັ້ງວັນທີ 3/3/2011 ມີທັງໝົດ 6 ຊຸດ (ເປັນພາສາອັງກິດ, ພາສາລາວ ແລະ ພາສາໄທ ຢ່າງລະ 2 ຊຸດ)
ແຕ່ລະຝ່າຍເກັບຮັກສາໄວ້ 3 ຊຸດ (ເປັນພາສາອັງກິດ, ພາສາລາວ ແລະ ພາສາໄທ ຢ່າງລະ 1 ຊຸດ)

**(ທ່ານ ກິ່ງ ໄຊຍະສານ)**
**ຜູ້ອຳນວຍການ**
**ວິທະຍາໄລຄູ ສະຫວັນນະເຂດ**

**(ຮອງສາດສະດາຈານ ໂກວິດ ເຊື່ອມກາງ)**
**ອະທິການບໍດີ**
**ມະຫາວິທະຍາໄລຣາຊະພັດບູຣີຣຳ**